ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການຄ້າພາຍໃນ
ເລກທີ: 0274
ວັນທີ: 16-2-18

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

0174

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 0174 /ອຄ
ນະຄອນຫຼວງວຽງຈັນ,ວັນທີ 13 FEB 2018

**ຂໍ້ຕົກລົງ**
**ວ່າດ້ວຍ ການແຕ່ງຕັ້ງຄະນະ ຮັບຜິດຊອບ**
**ຄົ້ນຄວ້າ ປັບປຸງ ລັດວິສາຫະກິດທີ່ຂຶ້ນກັບກະຊວງ ອຸດສາຫະກຳ ແລະ ການຄ້າ.**

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງ ອຸດສາຫະກຳ ແລະ ການຄ້າ, ເລກທີ 230/ນຍ, ລົງວັນທີ 24 ກໍລະກົດ 2017;
- ອີງຕາມ ໜັງສືສະເໜີຂອງກົມການຄ້າພາຍໃນ, ເລກທີ 0135/ກຄພນ.ຄວພ, ລົງວັນທີ 25 ມັງກອນ 2018;
- ອີງຕາມ ການຄົ້ນຄວ້າ ແລະ ນຳສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ.

## ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ຕົກລົງ:

ມາດຕາ 1: ແຕ່ງຕັ້ງຄະນະຮັບຜິດຊອບຄົ້ນຄວ້າ ປັບປຸງລັດວິສາຫະກິດ ທີ່ຂຶ້ນກັບກະຊວງອຸດສາຫະກຳ ແລະ ການຄ້າ, ດັ່ງມີລາຍຊື່ ລຸ່ມນີ້ :

| | | |
|---|---|---|
| 1- ທ່ານ ບຸນທຽນ ແກ້ວສີພາ | ຫົວໜ້າກົມການຄ້າພາຍໃນ | ເປັນຫົວໜ້າຄະນະ |
| 2- ທ່ານ ນາງ ຈັນດອນ ພານຸວົງ | ຮອງຫົວໜ້າກົມການຄ້າພາຍໃນ | ເປັນຮອງຄະນະ |
| 3- ທ່ານ ນາງ ຈັນສີ ມະນີຈັນ | ຫົວໜ້າພະແນກຄົ້ນຄວ້າ ວິໄຈ ແລະ ພະຍາກອນ | ເປັນຄະນະ |
| 4- ທ່ານ ສົມໃຈ ອິນທະປັດຖາ | ຫົວໜ້າພະແນກ ກົມ ຜຮ | ເປັນຄະນະ |
| 5- ທ່ານ ນາງ ຄຳພັດ ພູນສຸກ | ຫົວໜ້າພະແນກນິຕິກຳ, ຫ້ອງການ ກ/ຊ ອຄ | ເປັນຄະນະ |
| 6- ທ່ານ ວັນນີໄຊ ດວງພະຈັນ | ຫົວໜ້າພະແນກ ກົມທະບຽນແລະຄຸ້ມຄອງວິສາຫະກິດ | ເປັນຄະນະ |
| 7- ທ່ານ ບຸນຈັນ ລ້ອນໄຊ | ຮັກສາການຫົວໜ້າພະແນກ ສລ | ເປັນຄະນະ |
| 8- ທ່ານ ບຸນເລີດ ນາລີສັກ | ຮອງຫົວໜ້າພະແນກ ກົມ ຄລພ, ກ/ຊ ການເງິນ | ເປັນຄະນະ |
| 9- ທ່ານ ເອກຕິສັກ ອຸດົມຮັກ | ຮອງຫົວໜ້າພະແນກ ຄສລ | ເປັນຄະນະ |
| 10- ທ່ານ ປອ. ສຸກາຖາວອນ ວົງໄຊ | ຮອງຫົວໜ້າພະແນກ ຄວພ | ເປັນຄະນະ |

ມາດຕາ 2: ສິດ ແລະ ໜ້າທີ່ ຂອງຄະນະຮັບຜິດຊອບຄົ້ນຄວ້າ ປັບປຸງລັດວິສາຫະກິດ ທີ່ຂຶ້ນກັບກະຊວງອຸດສາຫະກຳ ແລະ ການຄ້າ ມີດັ່ງນີ້:

1- ຊີ້ນໍາ ນໍາພາ ການຈັດຕັ້ງປະຕິບັດ ການຄົ້ນຄວ້າປັບປຸງລັດວິສາຫະກິດທີ່ຂຶ້ນກັບກະຊວງອຸດສາຫະກໍາ ແລະ ການຄ້າ ໃຫ້ໄດ້ຮັບຜົນສໍາເລັດ ຕາມກໍານົດເວລາ ຂອງແຜນການທີ່ວາງໄວ້;

2- ແບ່ງຄວາມຮັບຜິດຊອບພາຍໃນຄະນະ, ຕິດຕາມ, ກວດກາການເຄື່ອນໄຫວວຽກງານ ແລະ ສະເໜີ ຂໍທິດຊີ້ນໍາຈາກຂັ້ນເທິງເປັນແຕ່ລະໄລຍະ;

3- ຄົ້ນຄວ້າ ຮູບແບບລັດວິສາຫະກິດໃຫມ່ ໃຫ້ສອດຄ່ອງກັບທິດທາງ ນະໂຍບາຍຂອງລັດຖະບານວາງອອກ, ເພື່ອຄວາມເປັນເອກະພາບໃນການລາຍງານ ແລະ ຂໍທິດໃນການປັບປຸງ;

4- ຄົ້ນຄວ້າ, ພາລະບົດບາດ, ກໍານົດນະໂຍບາຍ ແລະ ລະບຽບການ ໃນການຄຸ້ມຄອງ ການຈັດຕັ້ງ ແລະ ການເຄື່ອນ ໄຫວຂອງລັດວິສາຫະກິດທີ່ຖືກປັບປຸງໃໝ່ ຕາມເນື້ອໃນຂອງຂໍ້ຕົກລົງສະບັບນີ້;

5- ດໍາເນີນກອງປະຊຸມ ປຶກສາຫາລື ປະເມີນຜົນ, ຜ່ານ ແລະ ຮັບ ຮອງເອົາ"ຮ່າງ" ນະໂຍບາຍ, ລະບຽບການ,ພາລະບົດບາດ ແລະ ຮູບແບບຂອງລັດວິສາຫະກິດ ທີ່ປັບປຸງໃໝ່;

6- ລາຍງານ ແລະ ສະເໜີຂໍອະນຸມັດຈາກຂັ້ນເທິງ ໃນການຮັບຮອງເອົາການປັບປຸງຮູບແບບລັດວິສາຫະກິດໃໝ່.

ມາດຕາ 3: ແຕ່ງຕັ້ງກອງເລຂາ ຄະນະຮັບຜິດຊອບຄົ້ນຄວ້າ ປັບປຸງລັດວິສາຫະກິດ ທີ່ຂຶ້ນກັບກະຊວງອຸດສາຫະກໍາ ແລະ ການຄ້າ ດັ່ງມີລາຍຊື່ລຸ່ມນີ້:

| | | |
|---|---|---|
| 1- ທ່ານ ອານຸສັກ ອ່ອນສະຫວັດ | ຮອງຫົວໜ້າພະແນກ ຄວພ, ກຄພນ | ເປັນຫົວໜ້າ |
| 2- ທ່ານ ພີງພັກດີ ສີວິໄລ | ວິຊາການ ກຄພນ | ເປັນຮອງ |
| 3- ທ່ານ ນາງໄພສີ ໄຊປັນຍາ | ວິຊາການ ກຄພນ | ເປັນຄະນະ |
| 4- ທ່ານ ວິໄລພອນ ແກ້ວມະນີຈັນ | ວິຊາການ ກຄພນ | ເປັນຄະນະ |
| 5- ທ່ານ ສີໄວ ພົນທະວົງ | ວິຊາການ ກຄພນ | ເປັນຄະນະ |

ມາດຕາ 4: ສິດ ແລະ ໜ້າທີ່ ຂອງກອງເລຂາຄະນະຮັບຜິດຊອບຄົ້ນຄວ້າ ປັບປຸງລັດວິສາຫະກິດ ທີ່ຂຶ້ນກັບກະຊວງອຸດສາຫະກໍາ ແລະ ການຄ້າ ມີດັ່ງນີ້:

1- ຄົ້ນຄວ້າ ຂື້ນແຜນເຄື່ອນໄຫວວຽກງານ ຂອງຄະນະຮັບຜິດຊອບຄົ້ນຄວ້າປັບປຸງລັດວິສາຫະກິດ ທີ່ຂຶ້ນກັບກະຊວງອຸດສາຫະກໍາ ແລະ ການຄ້າ ເປັນແຕ່ລະໄລຍະ;

2- ປະສານ ແລະ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຮ່ວມມືໃນການຈັດຕັ້ງປະຕິບັດບັນດາວຽກງານທີ່ກ່ຽວຂ້ອງ ກັບການປັບປຸງລັດວິສາຫະກິດ ທີ່ຂຶ້ນກັບກະຊວງ ອຸດສາຫະກໍາ ແລະ ການຄ້າ ຕາມຂໍ້ຕົກ ລົງສະບັບນີ້;

3- ເກັບກໍາ, ສະຫລຸບ-ສັງລວມ ບັນດານິຕິກໍາທີ່ກ່ຽວຂ້ອງ ເພື່ອສຶກສາຄົ້ນຄວ້າ ສ້າງນະໂຍບາຍ, ລະບຽບການ, ພາລະບົດບາດ ແລະ ຮູບແບບຂອງລັດວິສາຫະກິດ ທີ່ປັບປຸງໃໝ່;

4- ຂຶ້ນແຜນ ກະກຽມຈັດກອງປະຊຸມ ປຶກສາຫາລື ປະເມີນຜົນ, ຜ່ານ ແລະ ຮັບ ຮອງເອົາ "ຮ່າງ" ນະໂຍບາຍ, ລະບຽບການ, ພາລະບົດບາດ ແລະ ຮູບແບບຂອງລັດວິສາຫະກິດ ທີ່ປັບປຸງໃໝ່;

5- ຄົ້ນຄວ້າ, ບັນທຶກ ແລະ ຮ່າງບົດລາຍງານ ກ່ຽວກັບບັນດາວຽກງານທີ່ກ່ຽວຂ້ອງໃນໃນການປັບປຸງລັດວິສາຫະ ກິດທີ່ຂຶ້ນກັບ ກະຊວງ ອຄ, ເພື່ອສະເໜີຂໍຄໍາເຫັນ ຊີ້ນໍາຈາກຄະນະປັບປຸງລັດວິສາຫະກິດ ຕາມຂໍ້ຕົກລົງສະບັບນີ້ ໃນແຕ່ລະໄລຍະ;

6- ຂຶ້ນແຜນເຄື່ອນໄຫວ, ສະຫລຸບ ແລະ ລາຍງານ ການນຳໃຊ້ງົບປະມານ, ການປະຕິບັດວຽກງານປັບປຸງລັດວິສາຫະກິດ ທີ່ຂຶ້ນກັບກະຊວງອຸດສາຫະກຳ ແລະ ການຄ້າ ເປັນແຕ່ລະໄລຍະ;

7- ປະຕິບັດໜ້າທີ່ອື່ນ ຕາມການມອບຫມາຍຂອງຄະນະຮັບຜິດຊອບ ໃນມາດຕາ 1, ຂອງຂໍ້ຕົກລົງສະບັບນີ້.

ມາດຕາ 5: ສຳລັບຄ່າໃຊ້ຈ່າຍຕ່າງໆ ແມ່ນນຳໃຊ້ງົບປະມານໂຄງການປັບປຸງລັດວິສາຫະກິດ ເພື່ອດັດສົມລາຄາ ປະຈຳປີ 2017, ເລກລະຫັດໂຄງການ: 113-13- 3 113 15 058 3.

ມາດຕາ 6: ຜູ້ທີ່ຖືກແຕ່ງຕັ້ງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດ ຂໍ້ຕົກລົງ ສະບັບນີ້ ຢ່າງເຂັ້ມງວດ ແລະ ຮັບປະກັນໃຫ້ໄດ້ຮັບໝາກຜົນສູງສຸດ.

ມາດຕາ 7: ຂໍ້ຕົກລົງສະບັບນີ້ ປ່ຽນແທນ ຂໍ້ຕົກລົງສະບັບ ເລກທີ 1954/ອຄ, ລົງວັນທີ 24 ຕຸລາ 2016 ແລະ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຮ. ທ. ລັດຖະມົນຕີ

ສົມຈິດ ອິນທະມິດ

ບ່ອນສົ່ງ:

| | |
|---|---|
| - ລັດຖະມນຕີ ແລະ ຮອງລັດຖະມົນຕີ | 04 ສະບັບ; |
| - ກົມຈັດຕັ້ງແລະພະນັກງານ | 02 ສະບັບ; |
| - ກົມການຄ້າພາຍໃນ | 04 ສະບັບ; |
| - ສຳເນົາ | 02 ສະບັບ. |